ທ່ານຕ້ອງແຈ້ງໃຫ້ພວກເຮົາຊາບຖ້າຫາກว่าລາຍໄດ້ຂອງທ່ານເພີ່ມຂຶ້ນໃນລະວ່າງປີນັ້ນ. ການລຸດລົງໃດໆກໍຕາມໃນຈຳນວນສະມາຊິກຄອບຄົວຫລືການເພີ່ມຂຶ້ນໃນຈຳນວນລາຍໄດ້ທີ່ສູງກວ່າ $50 ຕໍ່ເດືອນ ຫລື $600 ຕໍ່ປີ ກໍຕ້ອງໄດ້ແຈ້ງແລະລາຍງານໃຫ້ເຮົາຊາບ. ຖ້າຫາກว่าໃນເດືອນກ່ອນ ທ່ານໄດ້ຮັບຟູດສແຕມ ຫລືໄດ້ຮັບຜົນປະໂຍດຈາກໂຄງການຊ່ວຍເຫລືອຊົ່ວຄາວແກ່ຄອບຄົວທີ່ຂັດສົນ (TANF) ຫລືຈາກໂຄງການແຈກອາຫານໃນເຂດສວນຂອງເຊົ່າອິນເດັຍແດງ (FDPIR) ແລະໄດ້ແຈ້ງໝາຍເລກການຊ່ວຍເຫລືອຂອງທ່ານພ້ອມທັງຄັດຫລັກຖານຢັ້ງຢືນມາພ້ອມ ທ່ານກໍຕ້ອງແຈ້ງໃຫ້ພວກເຮົາຊາບເມື່ອໃດທີ່ທ່ານບໍ່ໄດ້ຮັບຜົນປະໂຍດເຫລົ່ານັ້ນແລ້ວ.ນອກນີ້ທ່ານຄວນແຈ້ງໃຫ້ພວກເຮົາຊາບເຊັ່ນກັນຖ້າຫາກว่าທ່ານຕົກງານ ແລະກາຍເປັນຄົນว่างງານ ແລະລາຍໄດ້ທີ່ເສັຍໄປໃນລະວ່າງທີ່ທ່ານว่างງານນັ້ນເຮັດໃຫ້ລາຍໄດ້ຂອງຄອຍຄົວຂອງທ່ານຕົກຢູ່ພາຍໃນລະດັບຂອງລາຍໄດ້ທີ່ອຳນວຍໃຫ້ທ່ານມີສິດໄດ້ຮັບເງິນທົດແທນນັ້ນ.

<u>ກໍລະນີລູກບຸນທັນ:</u>
ສຳຫລັບຄອບຄົວທີ່ມີລູກບຸນທັນ, ກະລຸນາອ່ານແນະນຳວິທີກອກຟອຣ໌ມຄຳຮ້ອງຂໍກິນອາຫານຟຣີນັ້ນເຊັ່ນກັນ ຫລືຖ້າຕ້ອງການຂໍ້ມູນເພີ່ມເຕີມ ໃຫ້ຕິດຕໍ່ໄປຍັງອົງການຂອງພວກເຮົາ.

<u>ການຮັກສາຄວາມລັບກ່ຽວກັບຂໍ້ມູນໃນຟອຣ໌ມຂໍກິນອາຫານຟຣີ:</u>
ທາງຫ້ອງການຂອງເຮົາຈະໃຊ້ຂໍ້ມູນໃນຟອຣ໌ມນີ້ສຳຫລັບຕັດສິນว่าສະຖານທີ່ຫລືສູນກາງທີ່ທ່ານຝາກດູແລເດັກຂອງທ່ານນັ້ນມີເງື່ອນໄຂຖືກຕ້ອງແລະມີສິດທີ່ຈະໄດ້ຮັບເງິນທົດແທນຕາມອັດຕາອັນໃດ. ພວກເຮົາອາດຈະມອບຂໍ້ມູນໃນຟອຣ໌ມຂອງທ່ານນັ້ນໃຫ້ແກ່ບັນດາເຈົ້າໜ້າທີ່ຮັບຜິດຊອບ ໂຄງການຊ່ວຍເຫລືອອື່ນໆ ເຊັ່ນໂຄງການອາຫານບຳລຸງເດັກ ໂຄງການອະນາໄມ ແລະໂຄງການສຶກສາ ເພື່ອຈະໄດ້ຕັດສິນว่าທ່ານມີສິດທີ່ຈະໄດ້ຮັບຜົນປໂຍດຈາກໂຄງການເຫລົ່ານັ້ນຫລືບໍ່.

<u>ການຈຳແນກກີດກັນໃນໂຄງການ:</u>
ກະຊວງກະເສດຂອງສະຫະຣັຖ (USDA) ຫ້າມການຈຳແນກກີດກັນ ຍ້ອນ ເຊື້ອຊາດ, ສີວພັນ, ຊາດກຳເນີດ, ເພດ, ວັຍ ຫລື ຄວາມພິການຢູ່ໃນໂຄງການແລະກິດຈະກັມທຸກຢ່າງຂອງກະຊວງ. ບຸກຄົນພິການທີ່ຕ້ອງໃຊ້ອຸປກອນອື່ນເພື່ອຕິດຕໍ່ສອບຖາມກ່ຽວກັບໂຄງການຕ່າງໆ (ເຊັ່ນຕ້ອງການໃຊ້ຕົວໜັງສືຂອງຄົນຕາບອດ ຕ້ອງການເອກກະສານທີ່ພິມດ້ວຍໂຕໜັງສືໃຫຍ່ໆ ຕ້ອງການເທບສຽງ ຫລືອື່ນໆ) ຄວນຕິດຕໍ່ໄປຍັງສູນກາງTARGET ຂອງກະຊວງກະເສດທີ່ເລກໂທ (202) 720-2600 ສຳລັບທັງສຽງເວົ້າ ແລະ ອຸປກອນສື່ສານທາງໄກສຳຫລັບຄົນຫູໜວກ (Voice and TDD).

ຖ້າທ່ານຢາກຍື່ນໜັງສືຮ້ອງທຸກ ກ່ຽວກັບການຈຳແນກກີດກັນ ໃຫ້ຂຽນສົ່ງໄປຍັງທີ່ຢູ່ນີ້: USDA, Director, Office of Civil Rights, Room 326 - W. Whitten Building, 14th and Independence Avenue S.W., Washington, D.C. 20250-9410 ຫລືໃຫ້ໂທຣະສັບໄປຍັງ (202) 720-5964 ສຳລັບທັງ Voice and TDD. ກະຊວງກະເສດສະຫະຣັຖ USDA ເປັນນາຍจ้างງ ແລະອົງການທີ່ໃຫ້ໂອກາດເທົ່າທຽມກັນແກ່ທຸກງຄົນ.

ຂອບໃຈໃນຄວາມຮ່ວມມືຂອງທ່ານ

ດ້ວຍຄວາມຈິງໃຈ

ລາຍເຊັນຂອງຜູ້ຕາງໜ້າອົງການ ວັນທີ